ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

0025
ເລກທີ:...../ປທລ/2020

ນະຄອນຫຼວງວຽງຈັນ, ວັນທີ.....20 APR 2020..

ແຈ້ງການ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ແລະ ບັນດາຜູ້ຖືຮຸ້ນຂອງບໍລິສັດ ທີ່ນັບຖື.

ເລື່ອງ: ເລື່ອນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019.

- ອີງຕາມ ຄຳສັ່ງ ວ່າດ້ວຍ ການເພີ່ມທະວີມາດຕະການສະກັດກັ້ນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19, ສະບັບເລກທີ 06/ນຍ ລົງວັນທີ 29 ມີນາ 2020;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວເລື່ອງການຕໍ່ເວລາ ແລະ ການແນະນຳເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງເລກທີ 06/ນຍ, ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020;
- ອີງຕາມ ໜັງສືແຈ້ງເຊີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຂອງ ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ, ສະບັບເລກທີ 0022/ປທລ/2020, ລົງວັນທີ 03 ເມສາ 2020.

ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (ບໍລິສັດ) ຂໍແຈ້ງມາຍັງທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ແລະ ບັນດາຜູ້ຖືຮຸ້ນຂອງບໍລິສັດ ຮັບຮູ້ຢ່າງທົ່ວເຖິງກ່ຽວກັບການເລື່ອນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຊຶ່ງໃນເບື້ອງຕົ້ນໄດ້ກຳນົດເອົາວັນທີ 29 ເມສາ 2020 ເປັນມື້ຈັດກອງປະຊຸມດັ່ງກ່າວ ແມ່ນໄດ້ເລື່ອນອອກໄປໂດຍບໍ່ມີກຳນົດແຕ່ບໍ່ໃຫ້ກາຍວັນທີ 29 ພຶດສະພາ 2020 ເນື່ອງຈາກການລະບາດຂອງພະຍາດ COVID-19 ຈຶ່ງເຮັດໃຫ້ມີຄວາມຈຳເປັນຕ້ອງໄດ້ເລື່ອນມື້ຈັດກອງປະຊຸມດັ່ງກ່າວອອກໄປ ເພື່ອເປັນການຮັບປະກັນສຸຂະພາບຂອງບັນດາຜູ້ຖືຮຸ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງຕາມມາດຕະການສະກັດກັ້ນການລະບາດຂອງລັດຖະບານ. ສຳລັບວັນທີ, ເວລາ ແລະ ສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ບໍລິສັດຈະແຈ້ງໃຫ້ທ່ານຮັບຮູ້ຕື່ມໃນພາຍຫຼັງ.

ດັ່ງນັ້ນ, ບໍລິສັດຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຮູ້ຢ່າງທົ່ວເຖິງ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ຈັດການທົ່ວໄປ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ມ່າ ລູວັນ